# ເປົ້າໝາຍ ການພັດທະນາ ແບບຍືນຍົງ



# ນ້ອຍ 2030

*"...ເຄິ່ງໜຶ່ງຂອງປະຊາກອນລາວ ແມ່ນໄວໜຸ່ມ ເຊິ່ງໃນນັ້ນ ເຄິ່ງໜຶ່ງຂອງປະຊາກອນໜຸ່ມ ແມ່ນເດັກຍິງ. ພວກເຂົາແມ່ນກຳລັງແຮງງານຂອງຊາດ ໃນປະຈຸບັນ ແລະ ອະນາຄົດ. ເພື່ອຮັບປະກັນການບັນລຸຜົນປະໂຫຍດສູງສຸດຈາກການປ່ຽນແປງດ້ານໂຄງປະກອບຂອງປະຊາກອນ, ພວກເຮົາຕ້ອງຮັບປະກັນວ່າ ໄວໜຸ່ມ ໂດຍສະເພາະໄວໜຸ່ມຍິງ ເຊິ່ງສ່ວນຫລາຍຖືກປະປ່ອຍໄວ້ຂ້າງຫລັງ, ເປັນໃຈກາງຂອງວາລະການພັດທະນາຂອງປະເທດ."*

ກ່າວໂດຍທ່ານ ປອ ຄຳລຽນ ພົນເສນາ, ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ,
ເນື່ອງໃນໂອກາດສະເຫລີມສະຫລອງວັນເດັກຍິງສາກົນ, 11 ຕຸລາ ປີ 2016

## ວັນເດັກຍິງສາກົນ

ໃນປີ 2011, ສະມັດຊາໃຫຍ່ຂອງອົງການສະຫະປະຊາຊາດ ໄດ້ຮັບຮອງເອົາວັນທີ 11 ຕຸລາ ຂອງທຸກໆປີ ເປັນວັນເດັກຍິງສາກົນ. ເຊິ່ງເນັ້ນໃສ່ຄວາມ ຈຳເປັນອັນຮີບດ່ວນ ໃນການຮັບຮອງສິດທິຂອງເດັກຍິງ ໂດຍວາງເປົ້າໝາຍໃສ່ແກ້ໄຂບັນຫາສິ່ງທ້າທາຍ ທີ່ເດັກຍິງກຳລັງປະເຊີນ ຢູ່ໃນທົ່ວໂລກ. ໃນແຕ່ລະປີ, ຫົວຂໍ້ ຂອງວັນເດັກຍິງສາກົນ ຈະມີຄວາມແຕກຕ່າງກັນເພື່ອເພີ່ມຄວາມເອົາໃຈໃສ່ຕໍ່ກັບຄວາມຕ້ອງການສະເພາະຂອງເດັກຍິງ. ໃນປີນີ້ ຫົວຂໍ້ແມ່ນ ***“ພະລັງຂອງໄວໜຸ່ມຍິງ: ວິໄສທັດ ປີ 2030.”*** ຫົວຂໍ້ໃນປີນີ້ ສະແດງເຖິງການຍອມຮັບຂອງປະຊາຄົມໂລກ ຕໍ່ກັບຄວາມສຳຄັນຂອງການລົງທຶນໃສ່ໄວໜຸ່ມຍິງ ເຊິ່ງຈະນຳມາສູ່ຜົນປະໂຫຍດທາງສັງຄົມ ແລະ ເສດຖະກິດ ທີ່ຫລວງຫລາຍ. ການລົງທຶນໃສ່ສຸຂະພາບ ແລະ ຊີວິດການເປັນຢູ່ຂອງໄວໜຸ່ມ ລວມທັງສຸຂະພາບຈະເລີນພັນ ແລະ ສຸຂະພາບທາງເພດ ແມ່ນມາດຕະການທີ່ດີທີ່ສຸດ ທີ່ສະມາຄົມໂລກ ຈະສາມາດດຳເນີນເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs). ດັ່ງນັ້ນ, ຄວາມຄືບໜ້າຂອງໄວໜຸ່ມຍິງ ຈຶ່ງມີບົດບາດຫລັກໃນການບັນລຸທຸກເປົ້າໝາຍຂອງ SDGs.

## ສະພາບການໃນປະຈຸບັນ ຢູ່ ສປປ ລາວ

ສປປ ລາວ ມີອັດຕາການແຕ່ງງານກ່ອນໄວອັນຄວນ ແລະ ອັດຕາການເກີດໃນໄວໜຸ່ມ ສູງທີ່ສຸດໃນພາກພື້ນ. ນີ້ສະແດງໃຫ້ເຫັນວ່າ ໄວໜຸ່ມຍິງ ຍັງບໍ່ໄດ້ຮັບການເອົາໃຈໃສ່ ແລະ ການລົງທຶນທີ່ຈຳເປັນເພື່ອພັດທະນາຄວາມອາດສາມາດຂອງພວກເຂົາ. ສປປ ລາວ ຢູ່ໃນໄລຍະຂ້າມຜ່ານ ດັ່ງນັ້ນ ການຕັດສິນໃຈຕໍ່ກັບປະຊາກອນໄວໜຸ່ມຈຶ່ງມີຄວາມສຳຄັນ ເພື່ອກຳນົດອະນາຄົດຂອງປະເທດຊາດ ໃນປີ 2030.

**ໄວໜຸ່ມຍິງ ຫລາຍກວ່າ 1 ໃນ 20 ຄົນ ບໍ່ເຄີຍເຂົ້າໂຮງຮຽນ.**



**ໄວໜຸ່ມຍິງ ຫລາຍກວ່າ 1 ໃນ 5 ຄົນ ໄດ້ອອກໂຮງຮຽນ**



**ໄວໜຸ່ມຍິງອາຍຸ 15-19 ປີ ຫລາຍກວ່າ 1 ໃນ 10 ຄົນ ໄດ້ເລີ່ມການເປັນແມ່**



**ໄວໜຸ່ມຍິງ ອາຍຸ 15-19 ປີ ເກືອບ 2 ໃນ 10 ຄົນ ແມ່ນແຕ່ງງານແລ້ວ**



## ນາງ ນ້ອຍ ແມ່ນໃຜ?

ນ້ອຍ ແມ່ນຕົວແທນ ໃຫ້ແກ່ໄວໜຸ່ມຍິງລາວ ອາຍຸ 10 ຫາ 19 ປີ ທັງໝົດ 700,230 ຄົນ ຢູ່ ສປປ ລາວ. ຄືກັນກັບພວກເຮົາທຸກຄົນ, ນ້ອຍ ຝັນທີ່ຈະໄດ້ຮັບການສຶກສາທີ່ມີຄຸນນະພາບ, ສາມາດເຂົ້າເຖິງການບໍລິການສຸຂະພາບຈະເລີນພັນ, ມີວຽກເຮັດງານທຳ ແລະ ສາມາດເຂົ້າຮ່ວມໃນຂະບວນການຕັດສິນບັນຫາ. ນ້ອຍຖືກສ້າງຂຶ້ນມາ ເພື່ອເປັນຈຸດເລີ່ມຕົ້ນຂອງການສົນທະນາ, ແລະ ສ້າງຄວາມເຂົ້າໃຈ ກ່ຽວກັບບັນຫາຂອງໄວໜຸ່ມ ໂດຍສະເພາະການແຕ່ງງານ ແລະ ຖືພາກ່ອນໄວອັນຄວນ. ໃນຄວາມເປັນຈິງແລ້ວ, ນ້ອຍ ແມ່ນສ້າງຂຶ້ນມາເພື່ອເພີ່ມຄວາມເອົາໃຈໃສ່ຕໍ່ກັບເປົ້າໝາຍສະຫະສະວັດວ່າດ້ວຍການພັດທະນາ (MDG) ສຳລັບໄວໜຸ່ມຍິງ ທີ່ຍັງບໍ່ທັນບັນລຸຜົນສຳເລັດ.

## ນ້ອຍ ຄົບຮອບໜຶ່ງປີ

ໃນປີຜ່ານມາ, ນ້ອຍ ແມ່ນໄດ້ຖືກເຜີຍແຜ່ ຢູ່ ສປປ ລາວ ໃນວັນເດັກຍິງສາກົນ ປີ 2016. ແນວຄວາມຄິດ ກ່ຽວກັບ ນ້ອຍ ແມ່ນເລີ່ມຕົ້ນຂຶ້ນ ຫລັງຈາກການຮັບຮອງເປົ້າໝາຍ ພັດທະນາແບບຍືນຍົງ( SDGs) ຂອງປະຊາຄົມໂລກ. ນ້ອຍ ແມ່ນເດັກຍິງອາຍຸ 10 ປີ ໃນຕອນທີ່ລາວຖືກສ້າງຂຶ້ນມາ. ດັ່ງນັ້ນ ວັນເດັກຍິງສາກົນ ຈຶ່ງຖືວ່າເປັນວັນຄົບຮອບຂອງ ລາວ. ໃນປີນີ້ ນ້ອຍແມ່ນອາຍຸ 11 ປີ. ໃນແຕ່ລະປີ, ຈະໄດ້ມີ ການນຳສະເໜີຄວາມຄືບໜ້າ ແລະ ຜົນສຳເລັດຂອງແຜນ ງານ ແລະ ການຮ່ວມມື ເພື່ອພັດທະນາໄວໜຸ່ມ.

ປີທຳອິດຂອງນ້ອຍ ແມ່ນໄດ້ຮັບໝາກຜົນ. ຫລາຍອົງການ ຈັດຕັ້ງ ຢູ່ ສປປ ລາວ ໄດ້ເຂົ້າໃຈຄວາມສຳຄັນຂອງການລົງ ທຶນໃສ່ກັບໄວໜຸ່ມ ແລະ ຄວາມຈຳເປັນຂອງການພັດທະນາ ວິທີການທີ່ມີສ່ວນຮ່ວມຂອງຫລາຍພາກສ່ວນ ເພື່ອຍົກບັນ ຫາໄວໜຸ່ມຍິງເປັນບູລິມະສິດຂອງວາລະການພັດທະນາ.




## ເປັນຫຍັງຈຶ່ງຕ້ອງລົງທຶນໃສ່ນ້ອຍ?

ການລົງທຶນໃສ່ ນ້ອຍ ຈະຊ່ວຍຄອບຄົວຫລຸດພົ້ນອອກຈາກ ວົງຈອນຂອງຄວາມທຸກຍາກ. ເມື່ອນ້ອຍ ສຳເລັດການ ສຶກສາຂອງລາວ, ລາວຈະມີລູກໃນເວລາທີ່ລາວມີອາຍຸຕອນ ເປັນຜູ້ໃຫຍ່. ຜ່ານການສຶກສາ, ນ້ອຍ ຈະມີຄວາມຮູ້ກ່ຽວກັບ ການໃຫ້ອາຫານທີ່ມີໂພສະນາການໃຫ້ລູກຂອງລາວ. ນ້ອຍ ຈະຮູ້ເຖິງຜົນປະໂຫຍດຂອງການເອົາລູກຫ່າງ ແລະ ຮູ້ຈັກ ປ້ອງກັນຕົນເອງຈາກພະຍາດຕິດຕໍ່ທາງເພດສຳພັນ. ໂດຍ ລວມແລ້ວ, ແມ່ທີ່ມີການສຶກສາ ຈະມີລູກທີ່ມີສຸຂະພາບ ແຂງແຮງກວ່າ ເຊິ່ງເປັນຜູ້ທີ່ຈະສົ່ງຕໍ່ຄວາມຮູ້ໃຫ້ລຸ້ນຄົນຕໍ່ໄປ ແລະ ຈະມີຜົນກະທົບໄລຍະຍາວຈາກລຸ້ນຄົນໜຶ່ງສູ່ອີກລຸ້ນ ຄົນຕໍ່ໄປ. ຖ້ານ້ອຍໄດ້ຮັບການສຶກສາ, ນ້ອຍ ກໍ່ຈະສາມາດ ຫາວຽກເຮັດງານທຳທີ່ມີປະສິດຕິຜົນໄດ້ດີຂຶ້ນ, ສາມາດປະ ກອບສ່ວນໃນການພັດທະນາຄອບຄົວ, ຊຸມຊົນ ແລະ ສັງຄົມ ໂດຍລວມ.

ໂດຍນຳໃຊ້ແນວຄວາມຄິດ ນາງ ນ້ອຍ, ອົງການ UNFPA ຕ້ອງການເນັ້ນໃຫ້ເຫັນວ່າ ໄວໜຸ່ມແມ່ນຊ່ວງອາຍຸທີ່ສຳຄັນ ທີ່ສຸດໃນຊີວິດຂອງໄວໜຸ່ມຍິງ. ແມ່ນຊ່ວງເວລາທີ່ກະກຽມ ພວກເຂົາ ໃນການຂ້າມຜ່ານເປັນຜູ້ໃຫຍ່ ແລະ ຕ້ອງຮັບປະ ກັນວ່າ ພວກເຂົາມີທັກສະຊີວິດທີ່ຈຳເປັນ ເພື່ອມີຊີວິດທີ່ ເຂັ້ມແຂງ, ມີຄວາມຮັບຜິດຊອບ ແລະ ຜາສຸກ. ຖ້ານ້ອຍ ສາມາດໄດ້ຮັບຜົນປະໂຫຍດຈາກໂອກາດເຫລົ່ານັ້ນ, ເຊິ່ງ ແມ່ນກຸນແຈສຳຄັນຂອງການພັດທະນາເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ, ພ້ອມທັງມີຄວາມສຳຄັນສຳລັບ ການບັນລຸຈຸດປະສົງຂອງ ແຜນພັດທະນາເສດຖະກິດສັງຄົມ ແຫ່ງຊາດ ຄັ້ງທີ VIII ແລະ ການຫລຸດພົ້ນອອກຈາກສະຖາ ນະພາບປະເທດດ້ອຍພັດທະນາ (LDC) ພາຍໃນປີ 2020.

## ຂອບແຜນວຽກ ຂອງ ນ້ອຍ 2030

ຢູ່ ສປປ ລາວ, ຫລາຍອົງການຈັດຕັ້ງ ໄດ້ດຳເນີນແຜນງານ ເພື່ອປົກປ້ອງສຸຂະພາບ ແລະ ສິດທິຂອງໄວໜຸ່ມຍິງ. ດັ່ງນັ້ນ ເຖິງເວລາແລ້ວທີ່ພວກເຮົາ ຈະຮ່ວມມືກັນ ໃນການຮັບຮອງ ວິທີການທີ່ປະສານກົມກຽວ ໃນການຈັດຕັ້ງແຜນງານສຳລັບ ໄວໜຸ່ມຍິງ, ເຊິ່ງເອີ້ນວ່າ ຂອບແຜນວຽກ ນ້ອຍ 2030. ຂອບແຜນວຽກ ນ້ອຍ 2030 ນີ້ ສາມາດເປັນພື້ນຖານໃຫ້ ແກ່ການຕິດຕາມ ແລະ ເພື່ອເຫັນໄດ້ເຖິງຄວາມຄືບໜ້າຂອງ ແຜນງານໄວໜຸ່ມຍິງ ພາຍໃຕ້ SDGs, ເຊິ່ງຈະຮັບປະກັນວ່າ ໄວໜຸ່ມຍິງ ຈະບໍ່ຖືກປະປ່ອຍໄວ້ຂ້າງຫລັງ ໃນເທື່ອນີ້.

ຂອບແຜນວຽກ ນ້ອຍ 2030 ຈະຊ່ວຍໃຫ້ແຕ່ລະອົງການ, ທີມໜ່ວຍ ແລະ ອົງການ ກຳນົດແຜນງານທີ່ເໝາະສົມສຳ ລັບນ້ອຍ ພາຍໃຕ້ວາລະເປົ້າໝາຍພັດທະນາແບບຍືນຍົງ SDG. ນອກຈາກນັ້ນ ຍັງຈະຊ່ວຍໃນການກຳນົດແຜນງານ ໃນປະຈຸບັນ, ການພັດທະນາແຜນງານໃໝ່ ແລະ ການຮ່ວມ ມື ທີ່ມີຜົນກະທົບໂດຍກົງ ຫລື ທາງອ້ອມ ຕໍ່ກັບນ້ອຍ. ສຳຄັນ ທີ່ສຸດ, ຂອບແຜນວຽກນີ້ ຍັງຈະຊ່ວຍໃຫ້ບັນດາຄູ່ຮ່ວມງານ ສາມາດເຮັດວຽກຮ່ວມກັນ ແບບປະສານກົມກຽວ ແລະ ເຫັນ ໄດ້ເຖິງການປະກອບສ່ວນຂອງຕົນ ຕໍ່ກັບການບັນລຸເປົ້າໝາຍ ການພັດທະນາລະດັບປະເທດ ແລະ ລະດັບໂລກ. ແຕ່ລະປີ ໃນວັນເດັກຍິງສາກົນ ພວກເຮົາສາມາດທົບທວນຄວາມຄືບ ໜ້າໃນການບັນລຸເປົ້າໝາຍ SDGs ສຳລັບນ້ອຍ.

## ນ້ອຍ, ການບັນລຸເປົ້າໝາຍ SDGs ແລະ ຄວາມສຳຄັນຂອງການຮ່ວມມື

ຂອບແຜນວຽກ ນ້ອຍ 2030 ຮຽກຮ້ອງໃຫ້ມີການຮ່ວມມື ຂອງບັນດາຂະແໜງການ ເພື່ອລົງທຶນໃສ່ໄວໜຸ່ມຍິງ. ການ ຮ່ວມມື ແມ່ນມີຄວາມຈຳເປັນເພື່ອບັນລຸເປົ້າໝາຍການພັດ ທະນາແບບຍືນຍົງ ແລະ ວາລະ 2030. ຜົນສຳເລັດຮ່ວມກັນ ແມ່ນຂຶ້ນໂດຍກົງກັບວ່າ ພວກເຮົາຈະຮ່ວມກັນຕອບຄຳຖາມ ຂອງໄວໜຸ່ມຍິງແນວໃດ. ແທດເໝາະກັບເປົ້າໝາຍການພັດ ທະນາແບບຍືນຍົງ 2030, ບາງຄາດໝາຍ ຈະຖືກຄັດເລືອກ ສຳລັບ ສປປ ລາວ ເພື່ອວັດແທກຄວາມຄືບໜ້າດ້ານເສດຖະ ກິດ-ສັງຄົມ ສຳລັບໄວໜຸ່ມຍິງ. ຄວາມຄືບໜ້າເຫລົ່ານີ້ ຄາດ ຫວັງວ່າ ຈະຖືກບັນຈຸເຂົ້າ ໃນພາກໜຶ່ງ ຫລື ເປັນເອກະ ສານຊ້ອນທ້າຍ ຂອງບົດລາຍງານ SDG ແບບສະໝັກໃຈ ຄັ້ງທຳອິດ ທີ່ ສປປ ລາວ ຈະນຳສະເໜີ ໃນປີ2018.

## ມາດຕະການທີ່ຕ້ອງດຳເນີນ

ໂຄງການ ນ້ອຍ 2030 ແມ່ນສ້າງຂຶ້ນມາ ເພື່ອຈັດຕັ້ງປະຕິບັດມາດຕະການເລີ້ມຕັ້ງແຕ່ມື້ນີ້. ຄຽງຄູ່ກັບຫົວຂໍ້ວັນເດັກຍິງສາກົນ ໃນວັນທີ 11 ຕຸລາ, ນ້ອຍ 2030 ຮຽກຮ້ອງໃຫ້ເພີ່ມການລົງທຶນສຳລັບປ້ອງກັນ ແລະ ປົກປ້ອງໄວໜຸ່ມຍິງໃນມື້ນີ້ ເພື່ອວ່າ ພວກເຂົາຈະກາຍເປັນແມ່ຍິງ ໃນປີ 2030 ທີ່ສາມາດບັນລຸຄວາມເທົ່າທຽມດ້ານບົດບາດຍິງ-ຊາຍ, ປະກອບສ່ວນເຂົ້າໃນການພັດທະນາປະເທດ. ໃນທິດທາງນີ້, ສປປ ລາວ ຈະສາມາດບັນລຸຜົນປະໂຫຍດຈາກການປ່ຽນແປງດ້ານໂຄງປະກອບປະຊາກອນ ທີ່ຊ່ວຍສົ່ງເສີມການຂະຫຍາຍຕົວຂອງ ເສດຖະກິດ.

- ແຕ່ລະຄູ່ຮ່ວມງານ ເຂົ້າຮ່ວມໃນການສ້າງ ນ້ອຍ ເພື່ອໃຫ້ເປັນຮູບແບບການໂຄສະນາເຜີຍແຜ່ທີ່ເຂັ້ມແຂງ ແລະ ເປັນເຈົ້າການຂອງໝົດທຸກພາກສ່ວນ ເພື່ອສຸມໃສ່ຄວາມສຳຄັນຂອງແຜນງານ ທີ່ສຸມໃສ່ເດັກຍິງ ແລະ ການເກັບກຳຂໍ້ມູນສະຖິຕິແຍກເພດ;

- ສືບຕໍ່ການເຜີຍແຜ່ໂຄສະນາຂອງບັນດາຂະແໜງການ ເພື່ອນຳໃຊ້ ນ້ອຍ ເປັນເຄື່ອງມື ໃນການເພີ່ມຄວາມຮູ້ໃຫ້ຄູ່ຮ່ວມງານຫລັກ ກ່ຽວກັບ ຄວາມສຳຄັນຂອງໄວໜຸ່ມຍິງ ແລະ ເພື່ອໃຫ້ແຕ່ລະອົງການສາມາດເຊື່ອມ ນ້ອຍ ເຂົ້າ ໃນແຜນວຽກທີ່ມີຢູ່ໃນປະຈຸບັນ ເຊິ່ງແທນເໝາະກັບວາລະ SDG;

- ເພື່ອເພີ່ມການຮ່ວມມື ກ່ຽວກັບ ນ້ອຍ ພາຍໃຕ້ຂອບ SDGs, ໂດຍສະເພາະ SDG17 ກ່ຽວກັບການເປັນຄູ່ຮ່ວມມື;

- ໃນການປຶກສາຫາລືກະກຽມສຳລັບກອງປະຊຸມໂຕະມົນ, ເພີ່ມຄວາມເອົາໃຈໃສ່ ຕໍ່ກັບ ນ້ອຍ, ໄວໜຸ່ມຍິງ ໃນແຕ່ລະເສົາຄ້ຳຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ NSEDP ແລະ ໜ່ວຍງານຂອງຂະແໜງການ;

- ເພີ່ມການລົງທຶນໃສ່ແຜນງານຂອງໄວໜຸ່ມ.

17 PARTNERSHIPS FOR THE GOALS

ທຸກຄົນ ມີໜ້າທີ່ຮັບຜິດຊອບ ໃນການຮັບປະກັນວ່າ ໄວໜຸ່ມຍິງສາມາດເຕີບໃຫຍ່ໃນສະພາບແວດລ້ອມທີ່ປອດໄພ, ໝັ້ນຄົງ ແລະ ແຂງແຮງ ແລະ ແມ່ນໜ້າທີ່ຂອງພວກເຮົາ ທີ່ຕ້ອງຮ່ວມມືກັນ ເພື່ອຮັບປະກັນວ່າ ບໍ່ມີໄວ ໜຸ່ມຜູ້ໃດ ຖືກປ່ອຍປະໄວ້ຂ້າງຫລັງ, ບໍ່ວ່າຈະຢູ່ບ່ອນໃດ.

Copyright © UNFPA 2017
Manufactured in Lao PDR